**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ

ເລກທີ: 0863 /ຜ-ຟຟລ

ນະຄອນຫຼວງວຽງຈັນ, ວັນທີ: 06/4/2022

ຮຽນ: ທ່ານ ຫົວໜ້າສຳນັກງານຄະນະກຳມະການຄຸ້ມຄອງຫຼັກຊັບ

ທ່ານ ຜູ້ອຳນວຍການໃຫຍ່ ບໍລິສັດຕະຫຼາດຫຼັກຊັບລາວ ຈຳກັດ ທີ່ນັບຖື

ເລື່ອງ: ແຈ້ງມະຕິທີ່ສຳຄັນຂອງກອງປະຊຸມສະພາບໍລິຫານສະໄໝວິສາມັນ ຄັ້ງທີ 2/2022

- ອີງຕາມຂໍ້ຕົກລົງຂອງຄະນະກຳມະການຄຸ້ມຄອງຫຼັກຊັບ ວ່າດ້ວຍລະບຽບການລາຍງານ ແລະການເປີດເຜີຍຂໍ້ມູນ ສະບັບເລກທີ 04/ຄຄຊ, ລົງວັນທີ 28 ມັງກອນ 2019.
- ອີງຕາມລະບຽບຂອງຕະຫຼາດຫຼັກຊັບລາວ ວ່າດ້ວຍການເປີດເຜີຍຂໍ້ມູນ ເລກທີ 330/LSX, ລົງວັນທີ 27 ກັນຍາ 2018.

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ (“ບໍລິສັດ”) ຂໍຖືເປັນກຽດແຈ້ງມະຕິທີ່ສຳຄັນ ຂອງກອງປະຊຸມສະພາບໍລິຫານສະໄໝວິສາມັນ ຄັ້ງທີ **2/2022**, ວັນທີ **05 ເມສາ 2022**, ມີລາຍລະອຽດລຸ່ມນີ້:

1. ອະນຸມັດການຈ່າຍເງິນປັນຜົນ ຈາກຜົນການດຳເນີນທຸລະກິດຂອງບໍລິສັດ ປະຈຳປີ 2021 ໃຫ້ແກ່ຜູ້ຖືຮຸ້ນທີ່ມີລາຍຊື່ຢູ່ໃນປຶ້ມບັນຊີຜູ້ຖືຮຸ້ນ ໃນວັນທີປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນໃນການໄດ້ຮັບເງິນປັນຜົນ ໃນວັນທີ **22 ເມສາ 2022** ໃນອັດຕາ **50** ກີບຕໍ່ຮຸ້ນ, ລວມເປັນເງິນປັນຜົນທີ່ຈະຈ່າຍທັງໝົດປະມານ **83,96** ຕື້ກີບ ແລະ ກຳນົດວັນຈ່າຍເງິນປັນຜົນໃຫ້ຜູ້ຖືຮຸ້ນ ໃນວັນທີ **27 ພຶດສະພາ 2022.** ແລະ ໃຫ້ນຳເລື່ອງນີ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ເພື່ອພິຈາລະນາ.

2. ອະນຸມັດການເພີ່ມຕົວຄູນດັດສະນີເງິນເດືອນພື້ນຖານ ຂອງພະນັກງານ ຜ-ຟຟລ ຂຶ້ນຕື່ມຈຳນວນ **10,5** ສ່ວນຮ້ອຍ ໃນສົກປີ 2022. ແລະ ໃຫ້ນຳເລື່ອງນີ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ເພື່ອພິຈາລະນາ.

3. ອະນຸມັດການແຕ່ງຕັ້ງຜູ້ກວດສອບບັນຊີພາຍນອກຄື ບໍລິສັດ Ernst and Young Lao Limited ເປັນຜູ້ກວດສອບບັນຊີພາຍນອກຂອງບໍລິສັດສຳລັບປີ 2023-2025, ເນື່ອງຈາກວ່າບໍລິສັດດັ່ງກ່າວຊະນະການປະມູນ ໂດຍມີຄ່າຈ້າງ ຂອງຜູ້ກວດສອບບັນຊີສຳລັບບັນຊີປີ 2023 ເປັນຈຳນວນເງິນບໍ່ເກີນ 685.000.000 ກີບ, ປີ 2024 ເປັນຈຳນວນເງິນບໍ່ເກີນ 685.000.000 ກີບ ແລະ ປີ 2025 ເປັນຈຳນວນເງິນບໍ່ເກີນ 685.000.000 ກີບ. ແລະ ໃຫ້ນຳເລື່ອງນີ້ສະເໜີຕໍ່ກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ເພື່ອພິຈາລະນາ.

4. ກຳນົດວາລະກອງປະຊຸມສາມັນຜູ້ຖືຮຸ້ນປະຈຳປີ 2021 ແລະ ການກຳນົດຜູ້ຕາງໜ້າຜູ້ຖືຮຸ້ນໃນການຮັບໃບສັນທະມີລາຍລະອຽດດັ່ງນີ້:

   **1) ວາລະກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ມີດັ່ງນີ້:**

   ວາລະທີ 1. ພິຈາລະນາ ແລະ ຮັບຮອງການແຕ່ງຕັ້ງສະພາບໍລິຫານຜູ້ໃໝ່ເພື່ອປ່ຽນແທນຜູ້ເກົ່າ ທີ່ຄົບອາຍຸການ, ຜູ້ທີ່ໄປຮັບໜ້າທີ່ໃໝ່ ແລະ ຜູ້ທີ່ໄດ້ຮັບການແຕ່ງຕັ້ງຄືນໃໝ່.

   ວາລະທີ 2. ພິຈາລະນາ ແລະ ຮັບຮອງບົດບັນທຶກກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2020.

   ວາລະທີ 3. ພິຈາລະນາ ແລະ ອະນຸມັດລາຍງານການເງິນ 6 ເດືອນຕົ້ນປີ 2021 ແລະ ການບໍ່ຈ່າຍເງິນປັນຜົນຈາກການດຳເນີນທຸລະກິດ 6 ເດືອນຕົ້ນປີ 2021 ແລະ ອະນຸມັດບົດລາຍງານຜົນການດຳເນີນທຸລະກິດຂອງບໍລິສັດ ປີ 2021 ລວມທັງລາຍງານການເງິນຂອງບໍລິສັດ ປີ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392
ໂທລະສັບ: (856-21) 316 142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la

2021, ແຜນການດຳເນີນທຸລະກິດຂອງບໍລິສັດປີ 2022 ແລະ ວິໄສທັດ ແລະ ພາລະກິດຂອງ ບໍລິສັດ ສະບັບປັບປຸງ.

ວາລະທີ 4. ພິຈາລະນາ ແລະ ອະນຸມັດການຈ່າຍເງິນປັນຜົນຈາກຜົນການດຳເນີນທຸລະກິດ ປະຈຳປີ 2021, ການກຳນົດວັນປິດປຶ້ມບັນຊີຜູ້ຖືຮຸ້ນ ເພື່ອກຳນົດສິດຂອງຜູ້ຖືຮຸ້ນທີ່ຈະໄດ້ຮັບເງິນປັນຜົນຈາກຜົນການດຳເນີນທຸລະກິດ ຂອງ ບໍລິສັດ ແລະ ການກຳນົດວັນທີຈ່າຍເງິນປັນຜົນ.

ວາລະທີ 5. ພິຈາລະນາ ແລະ ອະນຸມັດການຄັດເລືອກ ແລະ ການກຳນົດຄ່າຈ້າງຜູ້ກວດສອບພາຍນອກສຳລັບປີ 2023-2025.

ວາລະທີ 6. ພິຈາລະນາ ແລະ ອະນຸມັດ ການເພີ່ມຕົວຄູນດັດສະນີເງິນເດືອນພື້ນຖານ ຂອງພະນັກງານ ຜ-ຟຟລ ສົກປີ 2022.

ວາລະທີ 7. ພິຈາລະນາ ແລະ ຮັບຮອງການດັດແກ້ກົດລະບຽບບໍລິສັດ ມາດຕາ 9 ວ່າດ້ວຍກຳມະການສະພາບໍລິຫານ ແລະ ມາດຕາ 12 ວ່າດ້ວຍສະພາບໍລິຫານ.

**2)** ມອບອຳນາດໃຫ້ຜູ້ອຳນວຍການໃຫຍ່ ຫຼື ບຸກຄົນທີ່ໄດ້ຮັບມອບໝາຍຈາກບຸກຄົນດັ່ງກ່າວ ເປັນຜູ້ມີອຳນາດໃນການກຳນົດລາຍລະອຽດ ແລະ ເງື່ອນໄຂຕ່າງໆທີ່ຈຳເປັນກ່ຽວກັບການກະກຽມເປີດກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ໄດ້ທຸກປະການ, ລວມທັງໃຫ້ມີອຳນາດໃນການດຳເນີນການໃດໜຶ່ງອັນຈຳເປັນ ລວມທັງການກະກຽມເອກະສານຕ່າງໆ ແລະ ດຳເນີນການໃຫ້ຖືກຕ້ອງຕາມລະບຽບການ ແລະ ກົດໝາຍທີ່ກ່ຽວຂ້ອງ;

**3)** ກຳນົດຜູ້ຕາງໜ້າຜູ້ຖືຮຸ້ນໃນການຮັບໃບມອບສັນທະຄື: ແຕ່ງຕັ້ງ ທ່ານ ຄຳມູນ ວິພົງໄຊ, ທ່ານ ຄຳແກ້ວ ວິສີສົມບັດ ແລະ ທ່ານ ປອ. ພັນປະກິດ ອ່ອນພັນດາລາ ກຳມະການສະພາບໍລິຫານອິດສະຫຼະ ເປັນຜູ້ມອບຮັບສັນທະຈາກຜູ້ຖືຮຸ້ນ; ແລະ

**4)** ກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021 ຈະໄດ້ຈັດຂຶ້ນເປັນ 02 ລະບົບຄື: ລະບົບແບບຊ້ອງໜ້າ ທີ່ຫ້ອງປະຊຸມຊັ້ນ 01 ສຳນັກງານໃຫຍ່ລັດວິສາຫະກິດໄຟຟ້າລາວ (ຊຶ່ງໄດ້ແຈ້ງໃຫ້ຜູ້ຖືຮຸ້ນຊາບແລ້ວ) ແລະ ລະບົບແບບອອນລາຍ. ຊຶ່ງລາຍລະອຽດຄຳແນະນຳການປະຊຸມອອນລາຍຈະແຈ້ງໃຫ້ຜູ້ຖືຮຸ້ນຮັບຊາບພ້ອມກັບໜັງສືແຈ້ງເຊີນເຂົ້າຮ່ວມກອງປະຊຸມສາມັນຜູ້ຖືຮຸ້ນ ປະຈຳປີ 2021.

ດັ່ງນັ້ນ ຈຶ່ງຮຽນມາຍັງທ່ານເພື່ອຊາບ ແລະ ໃຊ້ຕາງລາຍງານ.

ດ້ວຍຄວາມນັບຖືເປັນຢ່າງສູງ,

**ປະທານສະພາບໍລິຫານ**

ບໍລິສັດ ຜະລິດ-ໄຟຟ້າລາວ ມະຫາຊົນ EDL-Generation Public Company

ບຸນເຫຼືອ ສິນໄຊວໍຣະວົງ

ຖະໜົນມິດຕະພາບລາວ-ໄທ, ບ້ານທົ່ງກາງ, ເມືອງສີສັດຕະນາກ, ນະຄອນຫຼວງວຽງຈັນ, ສປປ ລາວ. ຕູ້ ປ. ນ. 2392
ໂທລະສັບ: (856-21) 316 142 ແຟັກ: (856-21) 316 141. ອີເມລ: edlgenhq@edlgen.com.la, ເວັບໄຊທ໌: www.edlgen.com.la